ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3379

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2009/ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2018

# ແຈ້ງການ

**ເຖິງ:** ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ຂັ້ນຕ່າງໆ

**ເລື່ອງ:** ການເລື່ອນການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ແລະ ການອອກອະນຸຍາດລົງທຶນ ຫລື ອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງຂອງນາຍົກ, ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018, ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ

ເພື່ອສ້າງເງື່ອນໄຂຄວາມພ້ອມ ໃນໄລຍະລໍຖ້າການປະກາດໃຊ້ບັນຊີຄວບຄຸມ ທັງເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດການຂຶ້ນທະບຽນສ້າງຕັ້ງວິສາຫະກິດ, ການອອກອະນຸຍາດລົງທຶນ ຫລື ອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງເລກທີ 02/ນຍ ແລະ ອີງໃສ່ການຊີ້ນຳຂອງທ່ານລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ, ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ດັ່ງນີ້:

1. ເລື່ອນການເລີ່ມປະຕິບັດການຂຶ້ນທະບຽນສ້າງຕັ້ງວິສາຫະກິດ, ການອອກອະນຸຍາດລົງທຶນ ຫລື ອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງ, ສະບັບເລກທີ 02/ນຍ ຈາກວັນທີ ***01 ກັນຍາ 2018*** ຕາມທີ່ບົ່ງໄວ້ໃນແຈ້ງການ, ເລກທີ 1578/ຫອຄ.ກຫຄວ, ລົງວັນທີ 27 ມິຖຸນາ 2018 ມາເປັນວັນທີ ***01 ມັງກອນ 2019***,

2. ໃນໄລຍະແຕ່ນີ້ ຫາ ວັນທີ 01 ມັງກອນ 2019 ໃຫ້ແຕ່ລະພາກສ່ວນຈັດຕັ້ງປະຕິບັດວຽກງານການໃຫ້ບໍລິການ ທີ່ຕິດພັນກັບການເລີ່ມຕົ້ນທຸລະກິດ ຕາມລະບົບທີ່ເຄີຍປະຕິບັດມາ ແຕ່ໃຫ້ມີຄວາມສະດວກວ່ອງໄວຍິ່ງຂຶ້ນ, ໃນນີ້:

- ຂໍຄວາມຮ່ວມມືຈາກບັນດາກົມ ຫລືພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຂອງກະຊວງ, ທະບວງກົມ ປັບປຸງ ຫລື ສ້າງບັນດານິຕິກຳ ກ່ຽວກັບການພິຈາລະນາ ອອກອະນຸຍາດດຳເນີນທຸລະກິດ, ພ້ອມທັງອອກຄຳແນະນຳກ່ຽວກັບການແບ່ງຂັ້ນຄຸ້ມຄອງ ແລະ ຂັ້ນຕອນການອອກອະນຸຍາດ (ແບບຢ່າງ ຄຳແນະນຳ ບັນດາກົມ ຂອງກະຊວງອຸດສາຫະກຳ ແລະການຄ້າ ຈະສົ່ງໃຫ້ຊາບ ໃນພາຍຫລັງ);

- ໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ລາຍງານອຳນາດການປົກຄອງທ້ອງຖິ່ນຂອງຕົນ ເພື່ອກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ແລະ ການອອກອະນຸຍາດ ຕາມເນື້ອໃນ ຈິດໃຈຄຳສັ່ງຂອງນາຍົກດັ່ງກ່າວ ໃຫ້ບັນລຸຜົນ ຕາມຄາດໝາຍທີ່ວາງໄວ້, ໃນກໍລະນີ ມີບັນຫາໃຫ້ພົວພັນກັບກະຊວງອຸດສາຫະກຳ ແລະການຄ້າ (ກົມທະບຽນ ແລະຄຸ້ມຄອງວິສາຫະກິດ).

ແຈ້ງມາເພື່ອຊາບ ແລະ ຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳແລະການຄ້າ
ຫ້ອງການ

ນ.ບານສະຕິ ເທບພະວົງ

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ບັນດາຂະແໜງການກ່ຽວຂ້ອງ;
- ຫ້ອງວ່າການປົກຄອງແຂວງ, ນະຄອນຫລວງ;
- ສະພາການຄ້າ ແລະອຸດສາຫະກຳ ແຫ່ງຊາດລາວ;
- ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫລວງ.